# ຄວາມເຂົ້າໃຈຕໍ່ກັບບໍລິສັດທີ່ໄດ້ຮັບອະນຸຍາດ ອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ

**ຂຽນໂດຍ: ທ່ານ ບົວລຳພູ ຄຳມະນີວົງ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ປະຈຸບັນ ມີປະຊາຊົນຈຳນວນບໍ່ໜ້ອຍທີ່ຍັງມີຄວາມຮັບຮູ້ ແລະ ເຂົ້າໃຈທີ່ຈຳກັດ ຕໍ່ກັບຂໍ້ມູນຂ່າວ-ສານ ທີ່ຕິດພັນກັບວຽກງານຫຼັກຊັບ (ຕະຫຼາດທຶນ) ແລະ ຖືກບໍລິສັດຈຳນວນໜຶ່ງໂຄສະນາຊວນເຊື່ອແອບອ້າງວ່າ ຕົນໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານຫຼັກຊັບ (ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ) ໃຫ້ອອກຈຳໜ່າຍຮຸ້ນ ເພື່ອລະດົມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ແຕ່ໃນຕົວຈິງແລ້ວ ອົງການຄຸ້ມຄອງວຽກງານຫຼັກຊັບ ແມ່ນບໍ່ໄດ້ຮັບຮູ້ ແລະ ອະນຸຍາດໃຫ້ບໍລິສັດດັ່ງກ່າວ ອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ມາຮອດປະຈຸບັນ ບໍລິສັດທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈຳໜ່າຍຫຼັກຊັບເພື່ອລະດົມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຢ່າງຖືກຕ້ອງຕາມລະບຽບກົດໝາຍກ່ຽວກັບວຽກງານຫຼັກຊັບນັ້ນ ແມ່ນມີພຽງ 5 ບໍລິສັດ ເທົ່ານັ້ນຄື:

1. ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ;
2. ທະນາຄານການຄ້າຕ່າງປະເທດລາວມະຫາຊົນ;
3. ບໍລິສັດລາວເວີນມະຫາຊົນ;
4. ບໍລິສັດປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ;
5. ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ.

ສ່ວນບໍລິສັດອື່ນທີ່ໄປລະດົມທຶນຈາກພໍ່ແມ່ປະຊາຊົນ ໃນຮູບແບບການອອກຈຳໜ່າຍຮຸ້ນ, ຮຸ້ນກູ້ ຫຼື ຮູບແບບອື່ນທີ່ຄ້າຍຄືກັນ ຖືວ່າເປັນການລະເມີດລະບຽບກົດໝາຍກ່ຽວກັບວຽກງານຫຼັກຊັບ. ຖ້າຫາກທ່ານໃດພົບເຫັນປະກົດການທີ່ໜ້າສົງໄສດັ່ງກ່າວ ແມ່ນໃຫ້ຊ່ວຍແຈ້ງມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມເບີໂທ: 021 217770 ໃນໂມງລັດຖະການ.

ສະນັ້ນ ຈຶ່ງຂໍແຈ້ງເຕືອນມາຍັງພໍ່ແມ່ປະຊາຊົນບັນດາເຜົ່າ ຫຼື ຜູ້ທີ່ຮູ້ເທົ່າບໍ່ເຖິງການ ໃຫ້ມີສະຕິລະວັງຕົວ, ຢ່າໄປຫຼົງເຊື່ອການຕົວະຍົວະຂອງກຸ່ມຄົນບໍ່ຫວັງດີຂອງບໍລິສັດທີ່ເຄື່ອນໄຫວທຸລະກິດໃນຮູບແບບນີ້ ເພື່ອບໍ່ໃຫ້ຕົກເປັນເຫຍື່ອ ແລະ ສູນເສຍຊັບສິນຂອງຕົນ ແລະ ຂໍໃຫ້ຮ່ວມກັນ ສະກັດກັ້ນການກະທຳໃນລັກສະນະດັ່ງກ່າວ ເພື່ອບໍ່ໃຫ້ສ້າງຄວາມເສັຍຫາຍຕໍ່ກັບ ພໍ່ແມ່ປະຊາຊົນລາວອີກຕໍ່ໄປ.